ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------

ລັດຖະບານ

ເລກທີ: 327 /ລບ

ນະຄອນຫຼວງວຽງຈັນ, ວັນທີ 16.9.2014

# ດຳລັດ
# ວ່າດ້ວຍ ການຄຸ້ມຄອງ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6/5/2003;
- ອີງຕາມກົດໝາຍ ວ່າດ້ວຍການໂທລະຄົມມະນາຄົມ (ສະບັບປັບປຸງ) ສະບັບເລກທີ 09/ສພ, ລົງວັນທີ 21/12/2011;
- ອີງຕາມໜັງສືສະເໜີ ຂອງລັດຖະມົນຕີວ່າການ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສະບັບເລກທີ 1760/ ປທສ ລົງວັນທີ 12 ກໍລະກົດ 2014.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ໃນການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ເພື່ອຮັບປະກັນຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແນໃສ່ປົກປ້ອງກຽດສັກສີ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ໃຫ້ບໍລິການ, ຜູ້ໃຊ້ບໍລິການ ແລະ ສັງຄົມປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະສ້າງສາປະເທດຊາດ.

### ມາດຕາ 2 ການຄຸ້ມຄອງ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ

ການຄຸ້ມຄອງ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ ແມ່ນການຕິດຕາມ, ກວດກາການເຄື່ອນໄຫວ, ຕ້ານ ແລະ ສະກັດກັ້ນການນຳໃຊ້ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ ທີ່ເປັນໄພແກ່ສັງຄົມ ແລະ ຄວາມໝັ້ນຄົງຂອງຊາດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຂໍ້ມູນຂ່າວສານ** ໝາຍເຖິງ ຂໍ້ຄວາມທີ່ເປັນຕົວເລກ, ຕົວອັກສອນ, ຮູບພາບເໜັງຕີງ, ບໍ່ເໜັງຕີງ, ສຽງ, ວີດີໂອ ແລະ ອື່ນໆ;

2. **ສື່ສັງຄົມ** (Social media) ໝາຍເຖິງ ຮູບແບບການສື່ສານ ແລະ ການເຜີຍແຜ່ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ, ຊຶ່ງບຸກຄົນທົ່ວໄປສາມາດນຳສະເໜີ, ສົ່ງ, ຮັບ, ສົ່ງຕໍ່, ມີຄຳເຫັນ ຕໍ່ເນື້ອໃນຂໍ້ມູນຂ່າວສານ, ເປັນຕົ້ນ: ເຟສບຸກ, ທວິດເຕີ, ຢູທູບ ແລະ ອື່ນໆ;

3. **ໜ້າເວັບ** (Web page) ໝາຍເຖິງ ກະດານຂ່າວ ເອເລັກໂຕຣນິກ ທີ່ນຳສະເໜີໃນຮູບແບບສັນຍາລັກ, ຕົວເລກ, ຕົວໜັງສື, ຮູບພາບເໜັງຕີງ, ບໍ່ເໜັງຕີງ, ວີດີໂອ, ສຽງ ແລະ ຮູບແບບອື່ນໆ ຜ່ານອິນເຕີເນັດ;

4. **ເວັບໄຊ** ໝາຍເຖິງ ລະບົບຂໍ້ມູນຂ່າວສານ ທີ່ສ້າງຂຶ້ນເປັນໜຶ່ງ ຫຼື ຫຼາຍໜ້າເວັບ;

5. **ທະບຽນສ່ວນຕົວໃນສື່ສັງຄົມ** ໝາຍເຖິງ ໜ້າເວັບທີ່ໄດ້ສ້າງຂຶ້ນໂດຍຜ່ານສື່ສັງຄົມ ຊຶ່ງຜູ້ລົງທະບຽນ ຫຼື ອົງການຈັດຕັ້ງ ເປັນເຈົ້າຂອງໜ້າເວັບນັ້ນ ແລະ ເປັນຜູ້ຄຸ້ມຄອງເນື້ອໃນຂໍ້ມູນຂ່າວສານເອງ ຕົວຢ່າງ: www.facebook.com/champa;

6. **ຜູ້ໃຫ້ບໍລິການອິນເຕີເນັດ** ໝາຍເຖິງ ຜູ້ໃຫ້ບໍລິການ ເຊື່ອມຕໍ່ອິນເຕີເນັດ ໃຫ້ແກ່ ຜູ້ໃຊ້ບໍລິການ ສາມາດເຊື່ອມຕໍ່ ເຂົ້າຫາ ອິນເຕີເນັດໄດ້;

7. **ຜູ້ຄຸ້ມຄອງ ເວັບໄຊ** ໝາຍເຖິງ ຜູ້ມີສິດເຂົ້າໃນລະບົບຢ່າງຖືກຕ້ອງ ເພື່ອສ້າງ, ດັດແກ້, ປັບປຸງ ແລະ ລຶບລະບົບເຕັກນິກ ແລະ ເນື້ອໃນຂອງເວັບໄຊ;

8. **ຄວາມປອດໄພ ໃນການນຳໃຊ້ຂໍ້ມູນ ຂ່າວສານ** ໝາຍເຖິງ ການຮັກສາຂໍ້ມູນຂ່າວສານ ແລະ ລະບົບຂໍ້ມູນຂ່າວສານ ໃຫ້ປັດສະຈາກ ການຖືກເຊື່ອມຕໍ່, ການນຳໃຊ້, ການທຳລາຍ ແລະ ການປອມແປງຢ່າງຜິດກົດໝາຍ;

9. **ຜູ້ໃຊ້ບໍລິການອິນເຕີເນັດ** ໝາຍເຖິງ ບຸກຄົນ ທີ່ເຊື່ອມຕໍ່ເຂົ້າຫາ ອິນເຕີເນັດ ໃນຮູບແບບຕ່າງໆ ເພື່ອອ່ານ, ຂຽນ, ສົ່ງ, ສົ່ງຕໍ່ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບ ການນຳໃຊ້ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ**

ລັດສົ່ງເສີມ ແລະ ຊຸກຍູ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດທີ່ດຳລົງຊີວິດ ແລະ ເຄື່ອນໄຫວວຽກງານຢູ່ ສປປ ລາວ ນຳໃຊ້ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ ເຂົ້າໃນການເຄື່ອນໄຫວທາງດ້ານເສດຖະກິດ-ສັງຄົມ ໂດຍສະເພາະ ໃນຂະແໜງການສຶກສາ, ສາທາລະນະສຸກ, ການຄົ້ນຄ້ວາວິໄຈທາງວິທະຍາສາດ, ເຕັກໂນໂລຊີ ເພື່ອເພີ່ມປະສິດທິພາບ, ຄຸນນະພາບໃນການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ.

ລັດສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ນຳໃຊ້ ລະຫັດຊື່ອິນເຕີເນັດ ແຫ່ງຊາດລາວ (.LA) ຢ່າງກວ້າງຂວາງ ພ້ອມທັງ ຫັນໄປສູ່ການນຳໃຊ້ ເຕັກໂນໂລຊີເລກໝາຍອິນເຕີເນັດຍຸກໃໝ່ (IPV6), ສ້າງໂປຼແກຼມເປັນພາສາລາວ, ສ້າງເວັບໄຊ ແລະ ເຄືອຂ່າຍສັງຄົມອອນລາຍ ທີ່ເຄື່ອນໄຫວຖືກຕ້ອງ ຕາມລະບຽບກົດໝາຍຂອງ ສປປ ລາວ.

**ມາດຕາ 5 ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຂອງລັດ ແລະ ເອກະຊົນທັງພາຍໃນ ແລະ ຕ່າງປະເທດ ທີ່ໃຫ້ບໍລິການ ແລະ ໃຊ້ບໍລິການອິນເຕີເນັດ ຢູ່ ສປປ ລາວ.

## ໝວດທີ 2
## ການເຜີຍແຜ່ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ

**ມາດຕາ 6 ການເຜີຍແຜ່ຂໍ້ມູນ ຂ່າວສານ ຜ່ານອິນເຕີເນັດ**

ການເຜີຍແຜ່ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ ແມ່ນການນຳເອົາຂໍ້ຄວາມ, ຮູບພາບເໜັງຕີງ, ບໍ່ເໜັງຕີງ, ສຽງ, ວີດີໂອ ເຂົ້າສູ່ໜ້າເວັບໄຊ ເພື່ອສະເໜີ, ມີຄຳເຫັນ, ແລກປ່ຽນ, ສົ່ງ ແລະ ສົ່ງຕໍ່ໃຫ້ແກ່ໜຶ່ງ ຫຼື ຫຼາຍຄົນ.

**ມາດຕາ 7 ລະບຽບການເຜີຍແຜ່ຂໍ້ມູນ ຂ່າວສານ ຜ່ານອິນເຕີເນັດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃດໜຶ່ງ ສາມາດເຜີຍແຜ່ຂໍ້ມູນຂ່າວສານ ຜ່ານສື່ສັງຄົມ ແຕ່ຕ້ອງລະບຸແຫຼ່ງທີ່ມາ ຂອງຂໍ້ມູນຂ່າວສານ ຢ່າງຖືກຕ້ອງ.

ຜູ້ຄຸ້ມຄອງເວັບໄຊ ແລະ ເຈົ້າຂອງທະບຽນສ່ວນຕົວໃນສື່ສັງຄົມ ຕ້ອງກວດກາເນື້ອໃນຂໍ້ມູນຂ່າວສານກ່ອນຈະເຜີຍແຜ່ໃນໜ້າເວັບຂອງຕົນ.

ຂໍ້ມູນຂ່າວສານ ທີ່ບໍ່ຜ່ານສື່ທາງການ ຫຼື ສຳນັກງານສື່ ທີ່ຖືກຕ້ອງຕາມລະບຽບກົດໝາຍ ແມ່ນບໍ່ສາມາດໃຊ້ທາງການໄດ້.

ເຈົ້າຂອງ ຫຼື ຜູ້ຄຸ້ມຄອງເວັບໄຊ ຕ້ອງມີຄວາມຮັບຜິດຊອບໃນການກວດກາເນື້ອໃນ ຂໍ້ມູນຂ່າວສານຢ່າງລະອຽດກ່ອນ ຈະອະນຸຍາດໃຫ້ຜູ້ອື່ນເຜີຍແຜ່ ຜ່ານເວັບໄຊຂອງຕົນ.

**ມາດຕາ 8 ການສ້າງທະບຽນສ່ວນຕົວໃນສື່ສັງຄົມ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ຈະສ້າງທະບຽນສ່ວນຕົວໃນສື່ສັງຄົມຕ້ອງລະບຸຊື່, ນາມສະກຸນ ແລະ ທີ່ຢູ່ປັດຈຸບັນໃຫ້ຖືກຕ້ອງ.

**ມາດຕາ 9 ຄວາມປອດໄພໃນການນຳໃຊ້ຂໍ້ມູນ ຂ່າວສານ**

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ທີ່ນຳໃຊ້ ຂໍ້ມູນ ຂ່າວສານ ຜ່ານອິນເຕີເນັດ ຕ້ອງຮັກສາ ແລະ ປ່ຽນລະຫັດຜ່ານເລື້ອຍໆ ເພື່ອຮັບປະກັນຄວາມປອດໄພ ໃນການນຳໃຊ້ຂໍ້ມູນສ່ວນຕົວ ທັງເປັນການບໍ່ສ້າງເງື່ອນໄຂໃຫ້ບຸກຄົນອື່ນ ສວຍໃຊ້ໃນທາງຜິດລະບຽບກົດໝາຍ.

## ໝວດທີ 3
## ເນື້ອໃນຂໍ້ມູນຂ່າວສານ ທີ່ເຜີຍແຜ່ ຜ່ານອິນເຕີເນັດ

**ມາດຕາ 10 ເນື້ອໃນທີ່ບໍ່ອະນຸຍາດໃຫ້ເຜີຍແຜ່ ຜ່ານອິນເຕີເນັດ**

ເນື້ອໃນທີ່ບໍ່ອະນຸຍາດໃຫ້ເຜີຍແຜ່ຜ່ານອິນເຕີເນັດ ມີດັ່ງນີ້:

1. ຕິວະພິວະ, ຫຼອກລວງ ແລະ ຊວນເຊື່ອປະຊາຊົນ ທີ່ຢູ່ພາຍໃນ ແລະ ຕ່າງປະເທດ ຕໍ່ຕ້ານພັກປະຊາຊົນປະຕິວັດລາວ, ລັດຖະບານແຫ່ງ ສປປ ລາວ ຫຼື ມ້າງເພສັນຕິພາບ, ຄວາມເປັນເອກະລາດ, ອະທິປະໄຕ, ຄວາມເປັນເອກະພາບ ແລະ ຄວາມວັດທະນະຖາວອນ ຂອງ ສປປ ລາວ;
2. ຍຸຍົງ ແລະ ສົ່ງເສີມ ການເຄື່ອນໄຫວ ທີ່ເປັນການກໍ່ການຮ້າຍ, ຄາດຕະກໍາ ແລະ ປັ່ນປ່ວນຕໍ່ສັງຄົມ;
3. ໂຄສະນາ ບິດເບືອນ ແລະ ປ່າວຂ່າວອະກຸສົນ ເພື່ອສ້າງຄວາມແບ່ງແຍກ ລະຫວ່າງຊົນເຜົ່າ ຫຼືລະຫວ່າງ ຊາດ;
4. ເຜີຍແຜ່ ຮູບພາບລາມົກ, ຮູບພາບຕັດຕໍ່ ແລະ ຮູບພາບອື່ນໆ ທີ່ກົດໝາຍ ສປປ ລາວ ເກືອດຫ້າມ ຫຼື ແຕະຕ້ອງເຖິງຮີດຄອງປະເພນີອັນດີງາມຂອງຊາດ ແລະ ແຕະຕ້ອງເຖິງຊັບສິນທາງປັນຍາຂອງຜູ້ອື່ນ ແລະ ຊື້ຂາຍບໍລິການທາງເພດ;
5. ເຜີຍແຜ່ຄວາມລັບຂອງຊາດ, ທາງການທະຫານ ຫຼື ຄວາມລັບດ້ານອື່ນ ທີ່ກໍານົດໄວ້ຢູ່ໃນລະບຽບກົດໝາຍຂອງ ສປປ ລາວ;
6. ເຜີຍແຜ່ຂໍ້ມູນຂ່າວສານທີ່ບໍ່ຖືກຕ້ອງ ແລະ ບິດເບືອນຄວາມຈິງ ເພື່ອຈຸດປະສົງສ້າງຄວາມເຊື່ອມເສຍຕໍ່ກຽດສັກສີ ຫຼື ສິດທິສ່ວນບຸກຄົນຂອງ ຄົນອື່ນ, ພາກສ່ວນ, ສະຖາບັນ ຫຼື ອົງການອື່ນ;
7. ນໍາໃຊ້ຊື່ຂອງບຸກຄົນ ຫຼື ການຈັດຕັ້ງ, ຮູບພາບເໜັງຕີງ, ບໍ່ເໜັງຕີງ, ສຽງ, ວີດີໂອ, ລາຍເຊັນ, ລະຫັດຕ່າງໆ, ບັດສິນເຊື່ອທະນາຄານ ຫຼື ເອກະສານສ່ວນຕົວຂອງບຸກຄົນອື່ນ ເພື່ອຜົນປະໂຫຍດ ຫຼື ເພື່ອຈຸດປະສົງອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຜູ້ເປັນເຈົ້າຂອງ.

**ມາດຕາ 11 ເນື້ອໃນທີ່ອະນຸຍາດໃຫ້ເຜີຍແຜ່ ຜ່ານອິນເຕີເນັດ**

ເນື້ອໃນຂໍ້ມູນຂ່າວສານ ທີ່ໄດ້ຮັບອະນຸຍາດໃຫ້ເຜີຍແຜ່ ແມ່ນເນື້ອໃນທີ່ມີລັກສະນະສ້າງສັນ, ໃຫ້ຄວາມຮູ້, ເປັນປະໂຫຍດທາງສັງຄົມ ແລະ ເນື້ອໃນທີ່ບໍ່ຂັດກັບ ມາດຕາ 10 ເທິງນີ້.

## ໝວດທີ 4
## ໜ້າທີ່ຂອງຜູ້ໃຫ້ບໍລິການ ແລະຜູ້ໃຊ້ບໍລິການອິນເຕີເນັດ

**ມາດຕາ 12 ໜ້າທີ່ຂອງຜູ້ໃຫ້ບໍລິການອິນເຕີເນັດ**

ໜ້າທີ່ຂອງຜູ້ໃຫ້ບໍລິການ ອິນເຕີເນັດ ມີດັ່ງນີ້:

1. ລະງັບການເຂົ້າເຖິງຂໍ້ມູນຂ່າວສານ, ຕັດການເຊື່ອມຕໍ່ຊົ່ວຄາວ ຫຼື ຍາວນານ ຕໍ່ຜູ້ໃຊ້ບໍລິການທີ່ລະ ເມີດດໍາລັດສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ຕາມຄໍາສັ່ງຂອງອົງການຄຸ້ມຄອງ;

2. ໃຫ້ຄວາມຮ່ວມມື ແລະ ສະໜອງຂໍ້ມູນ ແກ່ອົງການຈັດຕັ້ງທີ່ກ່ຽວຂ້ອງ;
3. ປະຕິບັດຕາມມາດຕະຖານການເຊື່ອມຕໍ່ ທີ່ອົງການຈັດຕັ້ງກ່ຽວຂ້ອງກຳນົດອອກ;
4. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 13 ໜ້າທີ່ຂອງຜູ້ໃຊ້ບໍລິການອິນເຕີເນັດ**

ໜ້າທີ່ຂອງຜູ້ໃຊ້ບໍລິການອິນເຕີເນັດ ຫຼື ຂອງເຈົ້າຂອງທະບຽນສ່ວນຕົວໃນສື່ສັງຄົມ ມີດັ່ງນີ້:

1. ຮັບຜິດຊອບຕໍ່ໜ້າກົດໝາຍ ຕໍ່ເນື້ອໃນຂໍ້ມູນຂ່າວສານ ທີ່ຕົນນຳສະເໜີ, ແລກປ່ຽນ, ສົ່ງ ແລະສົ່ງຕໍ່ ຜ່ານເວັບໄຊ, ສື່ສັງຄົມອອນລາຍ ຫຼື ຮູບການອື່ນ ຜ່ານອິນເຕີເນັດ;
2. ຮັບປະກັນຄວາມປອດໄພ ຂອງຂໍ້ມູນຂ່າວສານສ່ວນຕົວຂອງຕົນ;
3. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 14 ໜ້າທີ່ຂອງຜູ້ຄຸ້ມຄອງເວັບໄຊ**

ໜ້າທີ່ຂອງຜູ້ຄຸ້ມຄອງເວັບໄຊ ມີດັ່ງນີ້:

1. ຮັບຜິດຊອບຕໍ່ໜ້າກົດໝາຍ ຕໍ່ເນື້ອໃນຂໍ້ມູນຂ່າວສານ ຜ່ານເວັບໄຊທີ່ຕົນຄຸ້ມຄອງ;
2. ກວດກາເນື້ອໃນຂໍ້ມູນຂ່າວສານ ກ່ອນຈະເຜີຍແຜ່ໃນໜ້າເວັບທີ່ຕົນຄຸ້ມຄອງ;
3. ລະງັບການເຜີຍແຜ່ເນື້ອໃນ ຂໍ້ມູນຂ່າວສານ ຂອງສະມາຊິກໃນເວັບໄຊຂອງຕົນ ທີ່ລະເມີດ ຕໍ່ດຳລັດສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ;
4. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 15 ຂໍ້ຫ້າມສຳລັບຜູ້ໃຫ້ບໍລິການອິນເຕີເນັດ**

ຫ້າມຜູ້ໃຫ້ບໍລິການອິນເຕີເນັດ ມີພຶດຕິກຳ ດັ່ງນີ້:

1. ເຜີຍແຜ່ຂໍ້ມູນ ຂອງຜູ້ໃຊ້ບໍລິການ ໂດຍບໍ່ໄດ້ຮັບອະນຸຍາດ;
2. ສ້າງເງື່ອນໄຂ ຫຼື ອຳນວຍຄວາມສະດວກໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີ ການເຄື່ອນໄຫວຕ້ານ ຫຼື ທຳລາຍແນວທາງນະໂຍບາຍຂອງພັກ-ລັດ, ກະທົບເຖິງວຽກງານປ້ອງກັນ ຊາດ ແລະ ປ້ອງກັນຄວາມສະຫງົບ;
3. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 16 ຂໍ້ຫ້າມສຳລັບຜູ້ໃຊ້ບໍລິການອິນເຕີເນັດ**

ຫ້າມຜູ້ໃຊ້ບໍລິການອິນເຕີເນັດ ມີພຶດຕິກຳ ດັ່ງນີ້:

1. ນຳສະເໜີ, ສົ່ງ ແລະ ສົ່ງຕໍ່ ຂໍ້ມູນຂ່າວສານ ທີ່ມີເນື້ອໃນຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 10 ຂອງດຳລັດສະບັບນີ້ດ້ວຍທຸກຮູບການ;
2. ປະກອບຄຳເຫັນທີ່ເປັນການສະໜັບສະໜູນ ຕໍ່ເນື້ອໃນຂໍ້ມູນຂ່າວສານ ຕາມທີ່ໄດ້ກຳນົດ ໄວ້ໃນມາດຕາ 10 ຂອງດຳລັດສະບັບນີ້.

**ມາດຕາ 17 ຂໍ້ຫ້າມສຳລັບຜູ້ຄຸ້ມຄອງເວັບໄຊ**

ຫ້າມຜູ້ຄຸ້ມຄອງເວັບໄຊ ມີພຶດຕິກຳ ດັ່ງນີ້:

1. ນຳສະເໜີ, ສົ່ງ, ສົ່ງຕໍ່ ຂໍ້ມູນຂ່າວສານ ທີ່ມີເນື້ອໃນຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 10 ຂອງດຳລັດສະບັບນີ້ດ້ວຍທຸກຮູບການ;

2. ອະນຸຍາດໃຫ້ຄົນອື່ນ ເຜີຍແຜ່ເນື້ອໃນ ຂໍ້ມູນຂ່າວສານ ທີ່ມີເນື້ອໃນຕາມທີ່ໄດ້ກຳນົດໄວ້ໃນ ມາດ ຕາ 10 ຂອງດຳລັດສະບັບນີ້;

3. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

## ໝວດທີ 6
## ການຄຸ້ມຄອງ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ

**ມາດຕາ 18 ຄວາມຮັບຜິດຊອບ ຂອງຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ**

ໃນການຄຸ້ມຄອງຂໍ້ມູນຂ່າວສານ ຜ່ານອິນເຕີເນັດ ຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຮັບຜິດຊອບ ດັ່ງນີ້:

1. ໂຄສະນາ ແລະ ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ ແລະ ລະບຽບກົດໝາຍກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານ ຜ່ານອິນເຕີເນັດ;

2. ຕິດຕາມ ແລະ ກວດກາການບໍລິການ ຂອງຜູ້ໃຫ້ບໍລິການອິນເຕີເນັດ ແລະ ການເຜີຍແຜ່ຂໍ້ມູນຂ່າວ ສານ ຂອງຜູ້ໃຊ້ບໍລິການອິນເຕີເນັດ;

3. ອອກຄຳສັ່ງໃຫ້ ບັນດາຜູ້ໃຫ້ບໍລິການອິນເຕີເນັດ ລະງັບການເຂົ້າເຖິງ ຂໍ້ມູນຂ່າວສານ, ຕັດການເຊື່ອມຕໍ່ຊົ່ວຄາວ ຫຼື ຍາວນານ ຕໍ່ ຜູ້ໃຊ້ບໍລິການທີ່ລະເມີດ ດຳລັດສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ;

4. ຮັບ ແລະ ພິຈາລະນາການສະເໜີ ຂອງຜູ້ໃຫ້ບໍລິການ, ຜູ້ໃຊ້ບໍລິການອິນເຕີເນັດ ແລະ ສັງຄົມທົ່ວໄປ ກ່ຽວກັບການເຜີຍແຜ່ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ;

5. ໃຫ້ການຮ່ວມມືກັບ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ໃນການຕິດຕາມຊອກຫາຜູ້ເຜີຍແຜ່ ຂໍ້ມູນຂ່າວສານ ທີ່ເປັນການລະເມີດ ດຳລັດສະບັບນີ້ ຫຼື ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ;

6. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດດຳລັດນີ້ ຕໍ່ ລັດຖະບານ ຢ່າງເປັນປົກກະຕິ.

**ມາດຕາ 19 ຄວາມຮັບຜິດຊອບ ຂອງຂະແໜງການຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ**

ໃນການຄຸ້ມຄອງ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ ຂະແໜງການຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ ຮັບຜິດຊອບ ດັ່ງນີ້:

1. ຕິດຕາມ, ກວດກາ, ໄຈ້ແຍກ ແລະ ວິເຄາະເນື້ອໃນຂໍ້ມູນຂ່າວສານ ຜ່ານອິນເຕີເນັດຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

2. ຄົ້ນຄ້ວາ, ຖະແຫຼງ ແລະ ເຜີຍແຜ່ຂ່າວສານຢ່າງເປັນທາງການ ເພື່ອຊີ້ແຈງກ່ຽວກັບຂໍ້ມູນຂ່າວສານ ທີ່ບໍ່ຖືກຕ້ອງ;

3. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອແຈ້ງແຫຼ່ງຂໍ້ມູນຂ່າວສານ ທີ່ກະທົບຕໍ່ຄວາມໝັ້ນຄົງຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

**ມາດຕາ 20 ຄວາມຮັບຜິດຊອບ ຂອງກະຊວງການປ້ອງກັນຄວາມສະຫງົບ**

ໃນການຄຸ້ມຄອງ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ ກະຊວງການປ້ອງກັນຄວາມສະຫງົບ ຮັບຜິດຊອບ ດັ່ງນີ້:

1. ຮັບແຈ້ງຄວາມຈາກ ບຸກຄົນ, ນິຕິບຸກຄົນ ແລະ ອົງການການຈັດຕັ້ງ ໃນກໍລະນີມີການ ກະທຳຜິດທີ່ພົວພັນເຖິງຄວາມໝັ້ນຄົງຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
2. ເກັບກຳ, ກວດກາ ແລະ ຄົ້ນຄ້ວາວິໄຈ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ ທີ່ມີລັກສະນະ ຄຸກຄາມເຖິງ ຄວາມໝັ້ນຄົງຂອງຊາດ, ຄວາມລັບຂອງຊາດ ແລະ ຄວາມສະຫງົບຂອງສັງຄົມ;
3. ສືບສວນ-ສອບສວນ ແລະ ດຳເນີນຄະດີ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ ລະເມີດດຳລັດສະບັບນີ້.

**ມາດຕາ 21 ຄວາມຮັບຜິດຊອບ ຂອງກະຊວງການສຶກສາທິການ ແລະ ກິລາ**

ໃນການຄຸ້ມຄອງ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ ກະຊວງການສຶກສາທິການ ແລະ ກິລາ ຮັບຜິດຊອບ ເຜີຍແຜ່ນິຕິກຳຕ່າງໆ ກ່ຽວກັບ ການຄຸ້ມຄອງການນຳໃຊ້ອິນເຕີເນັດ, ຄວາມຮູ້ດ້ານອິນເຕີເນັດ ໃຫ້ແກ່ນັກຮຽນ, ນັກສຶກສາ ເພື່ອໃຫ້ນັກຮຽນ, ນັກສຶກສາ ໄດ້ນຳໃຊ້ອິນເຕີເນັດ ໄປໃນທາງທີ່ເໝາະສົມ, ຫຼີກເວັ້ນຈາກ ຜົນກະທົບທາງລົບຂອງການນຳໃຊ້ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ.

**ມາດຕາ 22 ຄວາມຮັບຜິດຊອບ ຂອງພາກສ່ວນອື່ນ**

ບັນດາກະຊວງ, ອົງການທຽບເທົ່າ, ອົງການປົກຄອງທ້ອງຖິ່ນ ຮັບຜິດຊອບຄຸ້ມຄອງ ຂໍ້ມູນ ຂ່າວສານ ຜ່ານອິນເຕີເນັດ ທີ່ກ່ຽວຂ້ອງກັບອົງການຂອງຕົນ ພ້ອມທັງປະສານສົມທົບກັບ ກະຊວງການທີ່ ກ່ຽວຂ້ອງ ເພື່ອຕ້ານ ແລະ ສະກັດກັ້ນການເຜີຍແຜ່ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ ທີ່ລະເມີດກັບ ດຳລັດ ສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

## ໝວດທີ 7
## ມາດຕະການຈັດຕັ້ງປະຕິບັດ

**ມາດຕາ 23 ມາດຕະການສະກັດກັ້ນ**

ກະຊວງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນໃຈກາງ ປະສານສົມທົບກັບ ກະຊວງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ກະຊວງການປ້ອງກັນຄວາມສະຫງົບ ໃນການຕິດຕາມ, ກວດກາເນື້ອໃນ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ ພ້ອມທັງສະກັດກັ້ນ, ຈຳກັດ ແລະ ຕອບໂຕ້ເນື້ອໃນທີ່ຂັດກັບດຳລັດສະບັບນີ້.

**ມາດຕາ 24 ການສ້າງກິດຈະກຳ ແລະ ໂຄສະນາເຜີຍແຜ່ ການນຳໃຊ້ອິນເຕີເນັດ**

ກະຊວງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນເຈົ້າການໃນການປະສານສົມທົບ ກັບກະຊວງການທີ່ກ່ຽວຂ້ອງ ໃນການສ້າງກິດຈະກຳ, ຂະບວນການ ແລະ ໂຄສະນາເຜີຍແຜ່ ການນຳໃຊ້ ອິນເຕີເນັດ ໃຫ້ສອດຄ່ອງ ແລະ ຖືກຕ້ອງ ເພື່ອໃຫ້ ຜູ້ໃຊ້ບໍລິການ ແລະ ສັງຄົມ ຫຼີກເວັ້ນຜົນກະທົບທາງລົບ ຈາກການກະທຳ ທີ່ຮູ້ເທົ່າບໍ່ເຖິງການ ແລະ ການເຜີຍແຜ່ ຂໍ້ມູນຂ່າວສານ ທີ່ຂັດກັບດຳລັດສະບັບນີ້.

**ມາດຕາ 25 ການແຈ້ງເຕືອນ**

ຜູ້ຄຸ້ມຄອງເວັບໄຊ ຕ້ອງແຈ້ງເຕືອນ ແລະ ກຳນົດເງື່ອນໄຂໃນການເຜີຍແຜ່ ຂໍ້ມູນຂ່າວສານ ຜ່ານໜ້າເວັບຂອງຕົນ.

**ມາດຕາ 26 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດດຳລັດສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສັຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 27 ການຈັດຕັ້ງປະຕິບັດ**

ມອບໃຫ້ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ, ບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ໃຫ້ບໍລິການ ແລະ ໃຊ້ບໍລິການອິນເຕີເນັດຢູ່ ສປປ ລາວ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 28 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ ວັນລົງລາຍເຊັນ ແລະ ພາຍຫຼັງ ໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ລັດຖະບານ ແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ